**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາປະຊາຊົນແຂວງໄຊຍະບູລີ

ເລກທີ 83/ສພຂ.ຊຍ.

ໄຊຍະບູລີ, ວັນທີ 31 ກໍລະກົດ 2024.

# ບົດລາຍງານ

**ການເຄື່ອນໄຫວວຽກງານ ໃນໄລຍະແຕ່ກອງປະຊຸມ**
**ສະໄໝສາມັນ ເທື່ອທີ 6 ຫາ ເທື່ອທີ 7 ແລະ ແຜນການຮອດ**
**ກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາປະຊາຊົນແຂວງ ຊຸດທີ II**

- ອີງຕາມ ກົດໝາຍວ່າດ້ວຍການປັບປຸງບາງມາດຕາ ຂອງກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບ ເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 60 ກອງປະຊຸມສະໄໝສາມັນ ປະຈຳເທື່ອທີກເດືອນຕົ້ນ ປີ ຂອງສະພາປະຊາຊົນຂັ້ນແຂວງ.
- ອີງຕາມ ແຜນການເຄື່ອນໄຫວ ປະຈຳປີ 2023 ຂອງສະພາປະຊາຊົນແຂວງໄຊຍະບູລີ ສະບັບເລກທີ 10/ສພຂ.ຊຍ, ລົງວັນທີ 15 ມັງກອນ 2024.
- ອີງຕາມ ແຜນວຽກງານຈຸດສຸມ 6 ເດືອນຕົ້ນປີ 2024 ຂອງຄະນະປະຈຳສະພາປະຊາຊົນແຂວງໄຊຍະບູລີ ສະບັບເລກທີ 40/ຄປຈ.ຊຍ, ລົງວັນທີ 18 ມັງກອນ 2024.

## I. ການເຄື່ອນໄຫວ ໃນໄລຍະແຕ່ກອງປະຊຸມສະໄໝສາມັນ ເທື່ອທີ 6 ຫາ ເທື່ອທີ 7 ຂອງສະພາປະຊາຊົນແຂວງ ຊຸດທີ II

ໃນລະຫວ່າງກອງປະຊຸມສະໄໝສາມັນ ເທື່ອທີ 6 ຫາ ເທື່ອທີ 7 ຂອງສະພາປະຊາຊົນແຂວງ ຊຸດທີ II ແມ່ນໄລຍະທີ່ປະເທດລາວ ກໍ່ຄື ແຂວງໄຊຍະບູລີພວກເຮົາ ແມ່ນຍັງພົບກັບຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ລາຄານ້ຳມັນ, ລາຄາສິນຄ້າ, ອັດຕາແລກປ່ຽນຍັງສືບຕໍ່ເໜັງຕີງ ເຊິ່ງໄດ້ເຮັດໃຫ້ການດຳລົງຊີວິດຂອງພະນັກງານ ທະຫານ-ຕຳຫຼວດ ແລະ ປະຊາຊົນບັນດາເຜົ່າພົບຄວາມຫຍຸ້ງຍາກ. ແຕ່ພາຍໃຕ້ຄວາມເອົາໃຈໃສ່ນຳພາ-ຊີ້ນຳ ຂອງຄະນະປະຈຳພັກແຂວງ, ການຮ່ວມມືຂອງອົງການປົກຄອງແຕ່ລະຂັ້ນ ໃນ 6 ເດືອນຕົ້ນປີຜ່ານມາ ເຮັດໃຫ້ສະພາປະຊາຊົນແຂວງ ຍາດໄດ້ຜົນງານຫຼາຍດ້ານ ດັ່ງນີ້:

### ກ. ດ້ານດີ ແລະ ຜົນສຳເລັດ

1. ດ້ານນິຕິກຳ

1) ຄະນະປະຈຳສະພາປະຊາຊົນແຂວງ ໄດ້ສົມທົບ ຄະນະປະຈຳສະພາແຫ່ງຊາດ ຈັດຕັ້ງເຜີຍແຜ່ກົດໝາຍ ວ່າດ້ວຍການແກ້ໄຂຄຳຮ້ອງທຸກ ສະບັບປັບປຸງປີ 2022 ຢູ່ອ້ອມຂ້າງແຂວງ ແລະ ເມືອງ ພຽງ ຄຽງຄູ່ກັນນັ້ນກໍ່ໄດ້ນຳເອົາບາງມາດຕາຂອງ 4 ກົດໝາຍໃນຂົງເຂດສະພາ ລົງເຜີຍແຜ່ຢູ່ບັນດາສຳນັກງານອ້ອມຂ້າງແຂວງ, ເມືອງ ແລະ ບ້ານ ຕິດພັນກັບການລົງພົບປະຜູ້ມີສິດເລືອກຕັ້ງ; ນຳພາປະເມີນຜົນການຈັດຕັ້ງປະຕິບັດ ລັດຖະທຳມະນູນ ສະບັບປີ 2015 ໄດ້ 17 ຈຸດ ຈັດຕັ້ງການປະເມີນ ແລະ ປັບປຸງຮ່າງກົດໝາຍ ເພື່ອນຳເຂົ້າພິຈາລະນາຮັບຮອງ ໃນກອງປະຊຸມສະໄໝສາ ມັນເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ 13 ສະບັບ ໃນນີ້ ສ້າງໃໝ່ 2 ສະບັບ, ປັບປຸງ 11 ສະບັບ **(ເອກະສານຊ້ອນທ້າຍ 1)**;

2) ເຂົ້າຮ່ວມຄົ້ນຄວ້າປະກອບຄຳເຫັນ ໃສ່ຮ່າງໂຄງການການເມືອງຂອງພັກປະຊາຊົນປະຕິວັດລາວ, ຮ່າງກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໄດ້ 7 ຄັ້ງ, ມີ 9 ສະບັບ **(ເອກະສານຊ້ອນທ້າຍ 2)**;

3) ປັບປຸງບາງມາດຕາຂອງມະຕິ ວ່າດ້ວຍການປະສານງານຮ່ວມ ລະຫວ່າງ ຄະນະປະຈຳສະພາປະຊາຊົນແຂວງ ກັບ ຄະນະປະຈຳແນວລາວສ້າງຊາດແຂວງ.

2. ດ້ານການຕົກລົງບັນຫາພື້ນຖານຂອງທ້ອງຖິ່ນ

ໄດ້ເອົາໃຈໃສ່ໃນການຄົ້ນຄວ້າພິຈາລະນາ ຕົກລົງບັນຫາສຳຄັນພື້ນຖານ ຂອງແຂວງ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນທີ່ກຳນົດໄວ້ໃນກົດໝາຍ ໂດຍຜ່ານກອງປະຊຸມສະໄໝສາມັນຂອງສະພາປະຊາຊົນ ແຂວງ ແລະ ກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ ດັ່ງນີ້:

1) ໄດ້ຄົ້ນຄວ້າພິຈາລະນາບັນຫາສຳຄັນຂອງທ້ອງຖິ່ນໂດຍຜ່ານກົນໄກການດຳເນີນກອງປະຊຸມສະໄໝສາມັນ ເທື່ອ ທີ 6 ຂອງສະພາປະຊາຊົນແຂວງ ຊຸດທີ II ມີ 21 ເນື້ອໃນ, ຮັບຮອງເປັນມະຕິ 7 ສະບັບ; ໃນນີ້, ວຽກງານອົງການປົກຄອງ ແຂວງ 2 ສະບັບ, ສານປະຊາຊົນແຂວງ 1 ສະບັບ, ອົງການໄອຍະການປະຊາຊົນແຂວງ 1 ສະບັບ, ອົງການກວດສອບ ປະຈຳ ພາກເໜືອ 1 ສະບັບ, ອົງການກວດກາລັດແຂວງ 1 ສະບັບ ແລະ ສະພາປະຊາຊົນແຂວງ 1 ສະບັບ;

2) ຄົ້ນຄວ້າ ພິຈາລະນາ ຜ່ານກົນໄກການດຳເນີນກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ 6 ຄັ້ງມີ 10 ເນື້ອ ໃນ, ຮັບຮອງເປັນມະຕິ 4 ສະບັບ ເປັນຕົ້ນ: (1) ຮັບຮອງເອົາມະຕິ ວ່າດ້ວຍມູນຄ່າຄິດໄລ່ປະເມີນລາຄາໂຄງການກໍ່ສ້າງ ສວນສາທາລະນະນາບຸ່ງບ້ານ ບຸ່ງ ເມືອງ ໄຊຍະບູລີ; (2) ແຜນການຈັດແບ່ງນຳໃຊ້ທຶນພັດທະນາຊຸມຊົນ ຂອງໂຄງການ ໄຟຟ້າພະລັງງານຄວາມຮ້ອນຫົງສາ ປະຈຳປີ 2024; (3) ລາຄານ້ຳປະປາໃໝ່, (4) ແຜນການຈັດສັນລາຍຈ່າຍບ່ອນລາຍ ຮັບງົບປະມານເກີນແຜນ ປີ 2023 ; ນອກນີ້ຍັງໄດ້ ພິຈາລະນາ, ຮັບຮອງເອົາການແຕ່ງຕັ້ງ, ຍົກຍ້າຍບຸກຄະລາກອນ ຕາມການສະເໜີຂອງທ່ານເຈົ້າແຂວງ ມີ 7 ທ່ານ; ຄົ້ນຄວ້າພິຈາລະນາເອົາການແຕ່ງຕັ້ງ, ຍົກຍ້າຍ ຫົວໜ້າຄະນະສະມາຊິກ ສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ 3 ທ່ານ; ຈັດຕັ້ງການປະເມີນ ແລະ ໃຫ້ຄະແນນຕໍ່ບຸກຄະລາກອນທີ່ ລາຍ ງານ, ຊີ້ແຈງ ແລະ ຕອບຄຳຊັກຖາມ ຕໍ່ກອງປະຊຸມສະໄໝສາມັນ ເທື່ອທີ 6 ຕາມເປົ້າໝາຍທີ່ຖືກປະເມີນ 27 ທ່ານ, ຍິງ 4 ທ່ານ, ຜົນການປະເມີນໄດ້ປະເພດດີ 27 ທ່ານ, ຍິງ 4 ທ່ານ;

3) ເຂົ້າຮ່ວມກອງປະຊຸມຄົບຄະນະບໍລິຫານງານພັກແຂວງ-ເມືອງ, ກອງປະຊຸມອົງການປົກຄອງແຂວງ-ເມືອງ ກອງປະຊຸມສະໄໝສາມັນເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX; ເຂົ້າຮ່ວມ-ຈັດຕັ້ງເຊື່ອມຊຶມມະຕິ, ຄຳສັ່ງ, ຄຳແນະນຳ ມູນເຊື້ອຂອງພັກ, ຂອງຊາດ, ຂອງຜູ້ນຳ ແລະ ໄດ້ເຂົ້າຮ່ວມເຄື່ອນໄຫວກິດຈະກຳບຸນປະເພນີຂອງບັນດາເຜົ່າເປັນປະຈຳ.

3. ດ້ານການຕິດຕາມກວດກາ

1) ໂດຍປະຕິບັດຕາມກົດໝາຍ ວ່າດ້ວຍການຕິດຕາມກວດກາຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ໃນ ໄລຍະ 6 ເດືອນຜ່ານມາ ຄະນະປະຈຳສະພາປະຊາຊົນແຂວງ, ບັນດາຄະນະກຳມະການ ແລະ ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງ ໄດ້ຕັ້ງໜ້າເຄື່ອນໄຫວຕິດຕາມກວດກາ, ຊຸກຍູ້ ອົງການປົກຄອງແຕ່ລະຂັ້ນໃນການປະຕິບັດລັດຖະທຳ ມະນູນ, ກົດໝາຍ, ນິຕິກຳໃຕ້ກົດໝາຍ, ມະຕິກອງປະຊຸມສະພາປະຊາຊົນແຂວງ ເປັນຕົ້ນ: ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ໂຄງການລົງທຶນຂອງລັດ-ເອກະຊົນ, ໂຄງການລົງທຶນທີ່ມີຜົນກະທົບຕໍ່ສິ່ງແວດລ້ອມ ແລະ ສັງຄົມ, ການຈັດສັນຍົກຍ້າຍພູມລຳເນົາຂອງປະຊາຊົນທີ່ຖືກຜົນກະທົບຈາກໂຄງການ, ການນຳເຂົ້າ-ປຸງແຕ່ງນ້ຳມັນເຊື້ອໄຟ ເພື່ອສະ ໜອງການຊົມໃຊ້ພາຍໃນ, ການຄ້າຊາຍແດນ-ປັດໃຈການຜະລິດ, ການຄຸ້ມຄອງການນຳເຂົ້າ-ສົ່ງອອກສິນຄ້າຢູ່ບັນດາດ່ານ ສາກົນ; ວຽກງານປັບປຸງຄຸນນະພາບການຮຽນ-ການສອນ, ການຄຸ້ມຄອງກິລາກາຍະກຳໃນໄລຍະໃໝ່; ການຄຸ້ມຄອງວຽກງານ ເຜົ່າ-ສາສະໜາ; ການຈັດຕັ້ງປະຕິບັດພາລະບົດບາດ ຂອງຄະນະສະມາຊິກສະພາປະຊາຊົນແຂວງປະຈຳເຂດເລືອກຕັ້ງເມືອງ ລວມ ທັງໝົດໄດ້ 10 ຄັ້ງ. ຜ່ານການຕິດຕາມກວດກາດັ່ງກ່າວ ຄະນະປະຈຳສະພາປະຊາຊົນແຂວງ ກໍ່ໄດ້ສັງລວມຜົນການຕິດຕາມ ກວດກາແຕ່ລະຄັ້ງ ລາຍງານ ຄະນະປະຈຳພັກແຂວງ ແລະ ສະພາແຫ່ງຊາດເປັນປົກກະຕິ;

2) ໃນໄລຍະ 6 ເດືອນຕົ້ນປີ ສະພາປະຊາຊົນແຂວງ ໄດ້ເກັບກຳສັງລວມ, ວິເຄາະ-ວິໄຈຂໍ້ມູນ, ຄຳສະເໜີ ແລະ ສາຍດ່ວນຂອງປະຊາຊົນບັນດາເຜົ່າ ສົ່ງໃຫ້ອົງການປົກຄອງແຂວງ ຄົ້ນຄວ້າແກ້ໄຂ ລວມມີ 75 ເນື້ອໃນ, ປະຈຸບັນໄດ້ ຮັບການຊີ້ແຈງມາຍັງສະພາປະຊາຊົນແລ້ວ 57 ເນື້ອໃນ, ຍັງຄ້າງ 18 ເນື້ອໃນ ກວມ 7 ພາກສ່ວນຄື: (1)ຫ້ອງ ວ່າການແຂວງ, (2)ພະແນກຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, (3)ພະແນກສຶກສາທິການ ແລະ ກິລາ, (4)ກອງບັນຊາການທະຫານແຂວງ, (5)ທະນາຄານພັດທະນາລາວ, (6)ກອງບັນຊາການ ປກສ ແຂວງ ແລະ (7)ພະ

ແນກພະລັງງານ ແລະ ບໍ່ແຮ່ (**ເອກະສານຊ້ອນທ້າຍ 3**); ໄດ້ຮັບຄຳຮ້ອງຂໍຄວາມເປັນທຳເຂົ້າໃໝ່ 4 ເລື່ອງ, ຄ້າງເກົ່າ 3 ເລື່ອງ ລວມທັງໝົດ 7 ເລື່ອງ ສາມາດແກ້ໄຂສຳເລັດ ພ້ອມດຽວກັນນີ້ກໍ່ໄດ້ ຕ້ອນຮັບ ແລະ ໃຫ້ຄຳປຶກສາທາງດ້ານກົດໝາຍແກ່ປະຊາຊົນໄດ້ 5 ຄັ້ງ, ມີ 8 ເທື່ອຄົນ, ຍິງ 4 ເທື່ອຄົນ.

**4. ການສ້າງຄວາມເຂັ້ມແຂງ ໃຫ້ແກ່ສະພາປະຊາຊົນແຂວງ**

1) ສະມາຊິກສະພາປະຊາຊົນແຂວງ ແລະ ພະນັກງານຊ່ວຍວຽກ ໄດ້ຮັບການຝຶກອົບຮົມຍົກສູງຂີດຄວາມສາມາດດ້ານຕ່າງໆ ໄດ້ 18 ຄັ້ງ, ມີ 17 ຫົວຂໍ້ຄື: (1) ຍົກສູງຂີດຄວາມສາມາດໃຫ້ສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ຕໍ່ການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ; (2) ວຽກງານການສ້າງ, ປັບປຸງ ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ; (3) ການໂຄສະນາເຜີຍແຜ່, ການປະເມີນຜົນການຈັດຕັ້ງກົດໝາຍ, (4) ການຕິດຕາມກວດກາການເມີນການຈັດຕັ້ງປະຕິບັດກົດໝາຍ ແລະ ການຕິດຕາມກວດກາວຽກງານອົງການກວດສອບ; (5) ການຕິດຕາມກວດກາຂົງເຂດວຽກງານຍຸຕິທຳ, (6) ການຍົກສູງຄວາມສາມາດກ່ຽວກັບວຽກງານການດຳເນີນຄະດີຕາມຂະບວນການຍຸຕິທຳ ແລະ ການແກ້ໄຂຄຳຮ້ອງທຸກ; (7) ການຕິດຕາມກວດກາວຽກງານພັທນາຊົນນະບົດ ແລະ ແກ້ໄຂຄວາມທຸກຍາກ; (8) ການນຳໃຊ້ສິດທີ່ດິນ ຢູ່ໃນເຂດທີ່ດິນປ່າໄມ້; (9) ການສ້າງຄວາມຮັບຮູ້ໃນວຽກງານເສດຖະກິດ ດິຈິຕອນ; (10) ສຳມະນາສຳລັບສະມາຊິກສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ ຢູ່ ສປ ຈີນ; (11) ການຍົກສູງຂີດຄວາມສາມາດໃຫ້ວິຊາການ ໃນການເປັນເສນາທິການໃຫ້ແກ່ກຳມະການວຽກງານ ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນປະຈຳເຂດເລືອກຕັ້ງ; (12) ການຕ້ອນຮັບ ແລະ ໃຫ້ຄຳປຶກສາກ່ຽວກັບຄຳຮ້ອງຂໍຄວາມເປັນທຳ; (13) ການເປັນເສນາທິການໃຫ້ກຳມາທິການ ແລະ ຄະນະກຳມະການວັດທະນະທຳ-ສັງຄົມ ແລະ ບັນດາເຜົ່າ; (14) ການເກັບກຳຂໍ້ມູນ, ສັງລວມ ແລະ ຂີດຂຽນເອກະສານ ໃຫ້ແກ່ວິຊາການທີ່ເປັນເລຂານຸການໃຫ້ການນຳ; (15)ການນຳໃຊ້ລະບົບສື່ສານຂອງພາກລັດ (G-chat) ແລະ ມອບຮັບບັນຊີນຳໃຊ້ (Users); (16) ການສ້າງລະບົບຖານຂໍ້ມູນການເງິນ-ການບັນຊີ ແຫ່ງລັດ (ໂປຼແກຼມບັນຊີ); (17) ການເປັນຄູຝຶກ ໃນການນຳໃຊ້ລະບົບເຄືອຂ່າຍພາຍໃນຂອງສະພາແຫ່ງຊາດ ແລະ ສະພາປະຊາຊົນແຂວງ;

2) ສຳເລັດການຂຽນແຜນກຳນົດຕຳແໜ່ງງານ ຂອງສະພາປະຊາຊົນແຂວງ ແລະ ຖືກຮັບຮອງເອົາຈາກອົງການປົກຄອງແຂວງ; ນອກນີ້ກໍ່ໄດ້ປັບປຸງໄປຕາມແຜນກຳນົດ ໂດຍສຸມໃສ່ບັນຈຸຊັບຊ້ອນ ແຕ່ງຕັ້ງ, ຍົກຍ້າຍ ບ່ອນປະຈຳການຂອງພະນັກງານຊ່ວຍວຽກພາຍໃນສະພາປະຊາຊົນແຂວງ ແລະ ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ລວມມີ 9 ທ່ານ, ຍິງ 1 ທ່ານ; ສົມທົບກັບຄະນະພັກ, ອົງການປົກຄອງແຂວງ ສົ່ງພະນັກງານຫຼັກແຫຼ່ງ ຮຽນທິດສະດີຂັ້ນກາງ 1 ທ່ານ, ຮຽນກົດໝາຍ 1 ທ່ານ; ຕິດຕາມຊຸກຍູ້ ພະນັກງານທີ່ພວມຍົກລະດັບພາສາຫວຽດນາມຢູ່ແຂວງ ເຊີນລາ ສສ ຫວຽດນາມ 5 ທ່ານ;

3) ເອົາໃຈໃສ່ປັບປຸງແບບແຜນວິທີເຮັດວຽກ, ກົນໄກປະສານງານ ຂອງຄະນະປະຈຳສະພາປະຊາຊົນແຂວງ ກັບ ອົງການປົກຄອງແຂວງ; ບັນດາຄະນະກຳມະການ, ຄະນະເລຂາທິການ ກັບ ບັນດາພະແນກການ, ອົງການ, ກົມກອງຈັດກອງປະຊຸມຮ່ວມ ລະຫວ່າງ ຄະນະປະຈຳແນວລາວສ້າງຊາດ ກັບ ຄະນະປະຈຳສະພາປະຊາຊົນແຂວງ ປະຈຳປີ 2023 ເພື່ອຕີລາຄາຜົນໄດ້ຮັບໃນການຮ່ວມມືປະສານງານຂອງສອງອົງການ ແລະ ຄົ້ນຄວ້າ ປຶກສາຫາລືວຽກງານສຳຄັນຈຳເປັນຂອງແຂວງຈຳນວນໜຶ່ງ ພ້ອມນີ້ກໍ່ໄດ້ກະກຽມກອງປະຊຸມຮ່ວມ ລະຫວ່າງ ສະພາປະຊາຊົນແຂວງ ກັບ ອົງການປົກຄອງແຂວງ;

4) ສຳເລັດການເຊັນບົດບັນທຶກປະສານງານຮ່ວມ ລະຫວ່າງ ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 7 ກັບ ສະພາປະຊາຊົນແຂວງ ແລະ ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ກັບ ອົງການປົກຄອງເມືອງ 11 ເມືອງ.

**5. ການເຄື່ອນໄຫວຂອງສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງ**

ສະພາປະຊາຊົນແຂວງ ແລະ ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ໄດ້ເພີ່ມທະວີການປະສານສົມທົບ ກັບ ອົງການປົກຄອງຂັ້ນຕ່າງໆ ເພື່ອສ້າງເງື່ອນໄຂອຳນວຍຄວາມສະດວກໃຫ້ ຄະນະປະຈຳສະພາແຫ່ງຊາດ, ກຳມາທິການສະພາແຫ່ງຊາດ, ສະມາຊິກສະພາແຫ່ງຊາດ ແລະ ສະມາຊິກສະພາປະຊາຊົນແຂວງ ລົງພົບປະປະຊາຊົນຜູ້ມີສິດເລືອກຕັ້ງ ແລະ ເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ ເທື່ອທີ 6 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນ

ແຂວງ ຊຸດທີ II ໄດ້ ທັງໝົດ 56 ຈຸດ, ໃນນີ້ ສຳນັກງານ, ກົມກອງ 19 ຈຸດ, ບ້ານ 37 ຈຸດ; ມີຜູ້ເຂົ້າຮ່ວມ ທັງໝົດ 6.812 ຄົນ, ຍິງ 2.632 ຄົນ. ໄດ້ຮັບຄຳສະເໜີ ທັງໝົດ 75 ເນື້ອໃນ; ໃນການລົງເຄື່ອນໄຫວ ແຕ່ລະຄັ້ງ ຍັງໄດ້ສົມທົບ ກັບ ສະມາຊິກສະພາສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງ ນຳເອົາວັດຖຸປັດໃຈ ໄປມອບໃຫ້ແກ່ ການຈັດຕັ້ງ, ປະຊາຊົນຜູ້ທຸກຍາກດ້ອຍໂອກາດ ລວມມູນຄ່າ **226.500.000** ກີບ (ສອງຮ້ອຍຊາວຫົກລ້ານຫ້າແສນກີບ) .

6. ການເຄື່ອນໄຫວວຽກງານ ການຕ່າງປະເທດ

ເຂົ້າຮ່ວມກອງປະຊຸມໃຫຍ່ທົ່ວປະເທດ ຄັ້ງທີ III ຂອງຄະນະບໍລິຫານງານສະມາຄົມມິດຕະພາບລາວ-ຫວຽດນາມ; ເຂົ້າຮ່ວມງານພິທີເປີດປີທ່ອງທ່ຽວແຫ່ງຊາດ-ແຂວງດຽນບຽນ ແລະ ເທດສະການບຸນດອກສົ້ງວບານ ປະຈຳປີ 2024; ຕ້ອນຮັບກົງສຸນໃຫຍ່ ສສ ຫວຽດນາມ ປະຈຳພາກເໜືອລາວ; ພົບປະແລກປ່ຽນບົດຮຽນ ລະຫວ່າງ ຄະນະເລຂາທິການສະພາແຫ່ງຊາດລາວ ກັບ ຫ້ອງວ່າການສະພາແຫ່ງຊາດຫວຽດນາມ ຄັ້ງທີ XII ແລະ ເຂົ້າຮ່ວມຕ້ອນຮັບການມາຢ້ຽມຢາມ ແລະ ເຮັດວຽກ ຂອງອາດີດທະຫານອາສາສະໝັກ ສສ ຫວຽດນາມ.

ຂ. ສາເຫດທີ່ພາໃຫ້ມີຜົນສຳເລັດ

1).ຍ້ອນໄດ້ຮັບການນຳພາ-ຊີ້ນຳ ຈາກຄະນະປະຈຳສະພາແຫ່ງຊາດ, ຄະນະປະຈຳພັກແຂວງ, ການຮ່ວມມືຈາກອົງການປົກຄອງທ້ອງຖິ່ນ ໃນການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສະພາປະຊາຊົນແຂວງ ຕາມລັດຖະທຳມະນູນ ແລະ ກົດໝາຍກຳນົດ;

2). ຍ້ອນຄະນະປະຈຳສະພາປະຊາຊົນແຂວງ ໄດ້ເສີມຂະຫຍາຍ ບົດບາດ ກົງຈັກເສນາທິການ ແລະ ຊຸກຍູ້ສະມາຊິກສະພາປະຊາຊົນແຂວງ ໄດ້ການເຄື່ອນໄຫວຕາມກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ; ໄດ້ນຳພາຜັນຂະຫຍາຍແຜນການ 5 ປີ ແຜນກາງສະໄໝ ມາເປັນແຜນວຽກງານຈຸດສຸມໃນແຕ່ລະໄລຍະ ເພື່ອນຳພາບັນດາຄະນະກຳມະການ, ຄະນະເລຂາທິການ ແລະ ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ມາເປັນແຜນການລະອຽດ ແລະ ໄດ້ຕິດຕາມກວດກາ ຊຸກຍູ້ເປັນປົກກະຕິ;

3). ສະມາຊິກສະພາປະຊາຊົນ, ພະນັກງານ-ລັດຖະກອນ ພາຍໃນສະພາປະຊາຊົນແຂວງ ແລະ ເຂດເລືອກຕັ້ງເມືອງ ໄດ້ຮັບການເຊື່ອມຊຶມແນວທາງ-ນະໂຍບາຍຂອງພັກ, ກົດໝາຍຂອງລັດ, ເປັນເຈົ້າການປະຕິບັດວຽກງານດ້ວຍຄວາມຮັບຜິດຊອບ ແລະ ມີຜົນສຳເລັດຕາມລະດັບຄາດໝາຍ;

4). ກົນໄກການປະສານງານ ລະຫວ່າງ ສະພາປະຊາຊົນແຂວງ ກັບ ອົງການປົກຄອງແຂວງ, ແນວລາວສ້າງຊາດ, ພາກສ່ວນທີ່ກ່ຽວຂ້ອງ ໄດ້ຮັບການປັບປຸງ ແລະ ມີນິຕິກຳເປັນບ່ອນອີງໃນການເຄື່ອນໄຫວໃນການຈັດຕັ້ງປະຕິບັດ.

ຄ. ດ້ານຄົງຄ້າງ

ຄຽງຄູ່ກັບຜົນງານດ້ານດີ ທີ່ກ່າວມາຂ້າງເທິງນັ້ນ, ຍັງມີບາງຂໍ້ຄົງຄ້າງ ທີ່ຈະຕ້ອງໄດ້ເອົາໃຈໃສ່ແກ້ໄຂ ເປັນຕົ້ນ:

1) ການສ້າງ, ການປະເມີນ ແລະ ການປັບປຸງນິຕິກຳໃຕ້ກົດໝາຍ ຍັງບໍ່ທັນບັນລຸຕາມແຜນການທີ່ວາງໄວ້ (ແຜນການ 3 ສະບັບ, ຍັງບໍ່ທັນປະຕິບັດໄດ້);

2) ການຕົກລົງບັນຫາສຳຄັນພື້ນຖານຂອງແຂວງ ຕາມການສະເໜີຂອງອົງການປົກຄອງແຂວງ ໂດຍຜ່ານກົນໄກການດຳເນີນກອງປະຊຸມສະໄໝສາມັນ ແລະ ກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ ບາງຄັ້ງເນື້ອໃນບໍ່ທັນຄົບຖ້ວນ ມີລັກສະນະຫຼີບໄປຫຼີບມາຫຼາຍຄັ້ງ, ບາງວຽກກໍ່ມີລັກສະນະຮີບດ່ວນ ເຮັດໃຫ້ເວລາໃນການຄົ້ນຄວ້າ,ພິຈາລະນາມີຈຳກັດ;

3) ການພິຈາລະນາແກ້ໄຂຄຳຮ້ອງ, ຄຳສະເໜີ ແລະ ສາຍດ່ວນຂອງປະຊາຊົນ ເຖິງວ່າໄດ້ຈັດກອງປະຊຸມແລກປ່ຽນບົດຮຽນ ລະຫວ່າງ ສະພາປະຊາຊົນແຂວງ ກັບ ອົງການປົກຄອງແຂວງ ແລະ ຂະແໜງການທີ່ກ່ຽວຂ້ອງ, ແຕ່ຂອດການຈັດຕັ້ງປະຕິບັດຍັງບໍ່ທັນໄປຕາມກົດໝາຍ, ນິຕິກຳໃຕ້ກົດໝາຍ ແລະ ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງແຕ່ລະພາກສ່ວນ; ຂອດການແກ້ໄຂແມ່ນຊັກຊ້າ, ການນຳເອົາເນື້ອໃນໄປຊີ້ແຈງຕໍ່ຜູ້ມີສິດເລືອກຕັ້ງຍັງບໍ່ເຖິງເປົ້າໝາຍ ສະນັ້ນຈຶ່ງເຮັດໃຫ້ບັນຫາດຽວສະເໜີຫຼາຍຄັ້ງ ແລະ ຍື່ນໄປຫຼາຍພາກສ່ວນ;

4) ບັນດາກົງຈັກທີ່ສະພາປະຊາຊົນແຂວງສ້າງຕັ້ງ ຍັງບໍ່ທັນໄດ້ເອົາໃຈໃສ່ຜັນຂະຫຍາຍບັນດາມະຕິຂອງສະພາ ເຂົ້າສູ່ວຽກງານຕົວຈິງ ຈຶ່ງເຮັດໃຫ້ບາງຄາດໝາຍທີ່ວາງໄວ້ບໍ່ບັນລຸ; ເຖິງວ່າໄດ້ລົງຕິດຕາມ ກວດກາ ແລະ ຊຸກຍູ້ ອົງການ

ປົກຄອງແຂວງ, ເມືອງ ຈັດຕັ້ງປະຕິບັດມະຕິຂອງສະພາເປັນປົກກະຕິ ແຕ່ການແກ້ໄຂຜົນຂອງການຕິດຕາມກວດກາ ຍັງບໍ່ທັນມີປະສິດທິຜົນສູງ;

5) ຄະນະປະຈຳສະພາປະຊາຊົນແຂວງ ໄດ້ມີຄວາມພະຍາຍາມປະສານສົມທົບ ກັບ ສະພາແຫ່ງຊາດ, ຄະນະພັກ-ອົງການປົກຄອງແຂວງ ເພື່ອສ້າງຄວາມເຂັ້ມແຂງດ້ານຕ່າງໆ ໃຫ້ສະມາຊິກສະພາປະຊາຊົນແຂວງ, ພະນັກງານ-ລັດຖະກອນ ແຕ່ການໝູນໃຊ້ບົດຮຽນເຂົ້າໃນວຽກງານຕົວຈິງຍັງບໍ່ທັນດີເທົ່າທີ່ຄວນ.

**ງ. ສາເຫດທີ່ພາໃຫ້ມີຂໍ້ຄົງຄ້າງ**

1) ເຖິງວ່າມີກົດໝາຍ, ນິຕິກຳໃຕ້ກົດໝາຍ ເປັນບ່ອນອີງໃນການຈັດຕັ້ງປະຕິບັດວຽກງານຮ່ວມກັນ ລະຫວ່າງ ສະພາປະຊາຊົນແຂວງ ກັບ ອົງການປົກຄອງແຂວງ ແຕ່ການສະໜອງຂໍ້ມູນເຊິ່ງກັນ ແລະ ກັນ ໃນກອງປະຊຸມສະພາ ຍັງຊັກຊ້າ ບໍ່ລະອຽດ, ຊັດເຈນ; ຄວາມຮັບຜິດຊອບຂອງຂະແໜງການທີ່ກ່ຽວຂ້ອງຕໍ່ການສ້າງ, ການປະເມີນ, ການປັບປຸງ ນິຕິກຳໃຕ້ກົດໝາຍ ຍັງບໍ່ທັນໄປຕາມຂັ້ນຕອນຂອງການສ້າງນິຕິກຳໃຕ້ກົດໝາຍ ຈຶ່ງເຮັດໃຫ້ວຽກງານບໍ່ບັນລຸຕາມແຜນການທີ່ວາງໄວ້;

2) ການປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຄະນະປະຈຳ, ຄະນະກຳມະການ, ຄະນະເລຂາທິການ ແລະ ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ຍັງບໍ່ທັນເຂັ້ມງວດ ຈຶ່ງເຮັດໃຫ້ປະສິດທິຜົນຂອງວຽກງານບໍ່ທັນສູງ, ການປະຕິບັດຄຳສັ່ງແມ່ນບໍ່ມີຄວາມສຳຄັນ;

3) ຍ້ອນການສະໜອງງົບປະມານ, ອຸປະກອນ, ພາຫະນະຮັບໃຊ້ ຍັງຈຳກັດ ຈຶ່ງເຮັດໃຫ້ການເຄື່ອນໄຫວວຽກງານຂອງ ສະພາປະຊາຊົນແຂວງ ພົບຄວາມຫຍຸ້ງຍາກ.

**ຈ. ບົດຮຽນຖອດຖອນໄດ້**

1) ສືບຕໍ່ຈັດຕັ້ງເຜີຍແຜ່ ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສະພາປະຊາຊົນແຂວງ ໃຫ້ທຸກພາກສ່ວນຮັບຮູ້ ແລະ ເຂົ້າໃຈຢ່າງເລິກເຊິ່ງ;

2) ເອົາໃຈໃສ່ປະຕິບັດນິຕິກຳໃຕ້ກົດໝາຍ ທີ່ໄດ້ສ້າງຮ່ວມກັນ ລະຫວ່າງ ສະພາປະຊາຊົນແຂວງ ກັບ ອົງການປົກຄອງແຂວງ ແລະ ພາກສ່ວນອື່ນ ໃຫ້ເຂັ້ມງວດກວ່າເກົ່າ ພ້ອມທັງຈັດຕັ້ງເຜີຍແຜ່ໃຫ້ທົ່ວເຖິງ ຈຶ່ງຈະເຮັດໃຫ້ການປະສານງານມີຄວາມກົມກຽວ ແລະ ມີປະສິດຜົນສູງ;

3) ເພີ່ມທະວີຄວາມເປັນເຈົ້າການ ຕໍ່ການປະຕິບັດ ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສະມາຊິກສະພາປະຊາຊົນແຂວງ, ກົງຈັກທີ່ສະພາປະຊາຊົນແຂວງສ້າງຕັ້ງ ໃຫ້ສູງຂຶ້ນກວ່າເກົ່າ; ຖືສຳຄັນການຜັນຂະຫຍາຍ ບັນດາມະຕິຂອງສະພາແຕ່ລະໄລຍະໃຫ້ເປັນອັນລະອຽດ ຈຶ່ງຈະເຮັດໃຫ້ວຽກງານບັນລຸຕາມແຜນທີ່ວາງໄວ້;

4) ສືບຕໍ່ຍາດແຍ່ງ, ສ້າງສິ່ງອຳນວຍຄວາມສະດວກທາງດ້ານງົບປະມານ, ອຸປະກອນ, ພາຫະນະຮັບໃຊ້ ເຂົ້າໃນການເຄື່ອນໄຫວ ເພື່ອສ້າງຄວາມເຂັ້ມແຂງ ໃຫ້ແກ່ສະມາຊິກສະພາປະຊາຊົນແຂວງ ແລະ ກົງຈັກຂອງສະພາປະຊາຊົນແຂວງ.

## II. ທິດທາງແຜນການເຄື່ອນໄຫວວຽກງານ ໃນໄລຍະແຕ່ກອງປະຊຸມສະໄໝສາມັນ ເທື່ອທີ 7 ຮອດກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາປະຊາຊົນແຂວງ ຊຸດທີ II

ເພື່ອຮັບປະກັນ ການເຄື່ອນໄຫວວຽກງານ ໃນໄລຍະແຕ່ກອງປະຊຸມສະໄໝສາມັນ ເທື່ອທີ 7 ຮອດກອງ ປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາປະຊາຊົນແຂວງ ຊຸດທີ II ໃຫ້ບັນລຸຜົນສຳເລັດຕາມຄາດໝາຍທີ່ວາງໄວ້, ສະພາປະຊາຊົນແຂວງ ໄດ້ກຳນົດວຽກງານແຕ່ລະດ້ານ ດັ່ງນີ້:

**ກ. ຄາດໝາຍສູ້ຊົນ**

1) ສືບຕໍ່ສຶກສາອົບຮົມການເມືອງ-ແນວຄິດ ໃຫ້ສະມາຊິກສະພາປະຊາຊົນແຂວງ ແລະ ພະນັກງານ-ລັດຖະກອນ ພາຍໃນສະພາປະຊາຊົນແຂວງ ເຊື່ອມຊຶມ, ກຳແໜ້ນແນວທາງ-ນະໂຍບາຍຂອງພັກ, ກົດໝາຍຂອງລັດ ໃນແຕ່ລະໄລຍະ;

2) ຮັບປະກັນແຜນການສ້າງ ແລະ ປັບປຸງກົດໝາຍ, ນິຕິກຳໃຕ້ກົດໝາຍຕາມແຜນການ ຂອງສະພາແຫ່ງຊາດ, ສະພາປະຊາຊົນແຂວງ ແລະ ອົງການປົກຄອງແຂວງ ວາງໄວ້; ຮັບປະກັນການພິຈາລະນາຕົກລົງບັນຫາສຳຄັນພື້ນຖານ

ຂອງແຂວງ, ຕິດຕາມກວດກາຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຂອງສະພາປະຊາຊົນແຂວງ ໃຫ້ສອດຄ່ອງກັບແນວທາງນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍກຳນົດໄວ້ ໃຫ້ມີປະສິດທິຜົນ;

3) ຍົກສູງຂີດຄວາມສາມາດໃຫ້ແກ່ສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ, ພະນັກງານ-ລັດຖະກອນ ໃຫ້ບັນລຸຕາມແຜນການທີ່ວາງໄວ້;

4) ເພີ່ມທະວີການພົວພັນ ແລະ ປະສານງານກົມກຽວ ລະຫວ່າງ ສະພາປະຊາຊົນແຂວງ ກັບ ສະພາແຫ່ງຊາດ, ອົງການປົກຄອງແຂວງ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ ແລະ ອົງການຈັດຕັ້ງມະຫາຊົນ ໃຫ້ມີຄວາມຄ່ອງຕົວກວ່າເກົ່າ;

5) ສືບຕໍ່ເຄື່ອນໄຫວວຽກງານຕ່າງປະເທດ ຕາມແນວທາງການຕ່າງປະເທດຂອງພັກ-ລັດ ເພື່ອຍົກສູງບົດບາດຂອງສະພາປະຊາຊົນແຂວງໃຫ້ສູງຂຶ້ນ.

ຂ. ທິດທາງວຽກງານຈຸດສຸມແຕ່ລະດ້ານ

**1. ດ້ານນິຕິກຳ**

1) ສືບຕໍ່ປະສານສົມທົບ ກັບ ຄະນະປະຈຳສະພາແຫ່ງຊາດ, ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 7, ອົງການປົກຄອງແຂວງ ກະກຽມປະເມີນ ແລະ ປັບປຸງຮ່າງກົດໝາຍ 8 ສະບັບ **(ເອກະສານຊ້ອນທ້າຍ 4)**; ຈັດຕັ້ງການປະເມີນຜົນ ການຈັດຕັ້ງປະຕິບັດກົດໝາຍຂົງເຂດວັດທະນະທຳ-ສັງຄົມ 4 ສະບັບເປັນຕົ້ນ: (ກົດໝາຍວ່າດ້ວຍການສຶກສາ, ກົດໝາຍວ່າດ້ວຍການຄວບຄຸມເຄື່ອງດື່ມທີ່ມີທາດເຫຼົ້າ, ກົດໝາຍວ່າແຮງງານ ແລະ ກົດໝາຍ ວ່າດ້ວຍປ້າຍ) ເພື່ອພິຈາລະນາຮັບຮອງໃນກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາແຫ່ງຊາດ ຊຸດທີ IX ; ຊຸກຍູ້ອົງການປົກຄອງແຂວງ ປະເມີນ ແລະ ປັບປຸງນິຕິກຳໃຕ້ກົດໝາຍ 3 ສະບັບ ຄື: ຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍການປະຢັດລາຍຈ່າຍງົບປະມານຂອງລັດ, ຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍການສະກັດກັ້ນ ແລະ ຕ້ານຢາເສບຕິດ ແລະ ຂໍ້ຕົກລົງຂອງເຈົ້າແຂວງ ວ່າດ້ວຍການຄຸ້ມຄອງ ແລະ ການນຳໃຊ້ທີ່ດິນກະສິກຳ;

2) ເອົາໃຈໃສ່ຊຸກຍູ້ ບັນດາພະແນກການ, ອົງການໂຄສະນາເຜີຍແຜ່ກົດໝາຍ, ນິຕິກຳໃຕ້ກົດໝາຍ ໂດຍສະເພາະກົດໝາຍ ທີ່ຕິດພັນກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ໃຫ້ກວ້າງຂວາງແທດເຖິງເປົ້າໝາຍ;

3) ສົມທົບກັບອົງການປົກຄອງແຂວງ ສ້າງຮ່າງບົດບັນທຶກ ວ່າດ້ວຍການປະສານງານຮ່ວມ ລະຫວ່າງ ຄະນະເລຂາທິການສະພາປະຊາຊົນແຂວງ ກັບ ພະແນກການຕ່າງປະເທດ; ປັບປຸງການປະສານງານຮ່ວມ ລະຫວ່າງ ຄະນະກຳມະການຍຸຕິທຳ ປ້ອງກັນຊາດ, ປ້ອງກັນຄວາມສະຫງົບ ກັບ ສະຫະພັນນັກຮົບເກົ່າແຂວງ.

**2. ການຕົກລົງບັນຫາສຳຄັນຂອງທ້ອງຖິ່ນ**

ສະພາປະຊາຊົນແຂວງ ຈະໄດ້ຄົ້ນຄວ້າ, ພິຈາລະນາ ຮັບຮອງເອົາເນື້ອໃນຕ່າງໆ ຜ່ານກົນໄກການດຳເນີນກອງປະຊຸມສະພາປະຊາຊົນແຂວງ ແລະ ກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ ດັ່ງນີ້:

**2.1. ກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາປະຊາຊົນແຂວງ ຊຸດທີ II ມີເນື້ອໃນຕົ້ນຕໍ ດັ່ງນີ້:**

1) ພິຈາລະນາ ແລະ ຮັບຮອງເອົາບົດລາຍງານຂອງທ່ານເຈົ້າແຂວງ ກ່ຽວກັບການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ ປະຈຳປີ 2024 ແລະ ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດຂອງແຂວງ ໃນປີ 2025;

2) ພິຈາລະນາ ແລະ ຮັບຮອງເອົາບົດລາຍງານ ຜົນຂອງການກວດສອບຄືນ ແລະ ບົດສະຫຼຸບງົບປະມານຂາດຕົວປະຈຳປີ 2023 ແລະ ແຜນການເຄື່ອນໄຫວ ປະຈຳປີ 2024 ຂອງອົງການກວດສອບປະຈຳພາກເໜືອ 1;

3) ພິຈາລະນາ ແລະ ຮັບຮອງເອົາບົດລາຍງານການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານປະຈຳປີ 2023 ແລະ ແຜນການເຄື່ອນໄຫວວຽກງານປະຈຳປີ 2024 ຂອງອົງການກວດກາລັດແຂວງ; ບົດລາຍງານຜົນການກວດກາຕາມຜົນຂອງການກວດສອບ ປະຈຳປີ 2023;

4) ພິຈາລະນາ ແລະ ຮັບຮອງ ເອົາບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2024 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2025 ຂອງອົງການໄອຍະການປະຊາຊົນແຂວງ;

5) ພິຈາລະນາ ແລະ ຮັບຮອງ ເອົາບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດ ແຜນການເຄື່ອນໄຫວວຽກງານ ປະຈຳປີ 2024 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2025 ຂອງສານປະຊາຊົນແຂວງ;

6) ຮັບຟັງການລາຍງານການຈັດຕັ້ງປະຕິບັດວາລະແຫ່ງຊາດ ກ່ຽວກັບການແກ້ໄຂບັນຫາຢາເສບຕິດ ປະຈຳປີ 2024 ແລະ ທິດທາງແຜນການ ປະຈຳປີ 2025 ຫຼື ວຽກງານໃດໜຶ່ງຂອງອົງການປົກຄອງແຂວງ;

7) ພິຈາລະນາ ແລະ ຮັບຮອງ ເອົາບົດລາຍງານ ກ່ຽວກັບການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ ປະຈຳປີ 2024 ແລະ ທິດທາງແຜນການເຄື່ອນໄຫວວຽກງານ ປະຈຳປີ 2025 ຂອງສະພາປະຊາຊົນແຂວງ;

8) ການປະກອບຄຳເຫັນຂອງ ອົງການແນວລາວສ້າງຊາດແຂວງ ຕໍ່ການປະຕິບັດໜ້າທີ່ຂອງສະພາປະຊາຊົນແຂວງ;

9) ພິຈາລະນາ ແລະ ຮັບຮອງເອົາການປະເມີນນິຕິກຳໃຕ້ກົດໝາຍຂອງແຂວງ 3 ສະບັບ;

10) ຈັດຕັ້ງການປະເມີນ ແລະ ໃຫ້ຄະແນນ ຕໍ່ຄວາມຮັບຜິດຊອບຂອງບຸກຄະລາກອນ ທີ່ຂຶ້ນລາຍງານ ແລະ ຕອບຄຳຊັກຖາມ ໃນກອງປະຊຸມສະພາປະຊາຊົນແຂວງ;

11) ພິຈາລະນາບັນຫາອື່ນໆ ຕາມການຕົກລົງຂອງຄະນະປະຈຳສະພາປະຊາຊົນແຂວງ.

**2.2. ກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ**

1) ຊີ້ນຳການເປັນເຈົ້າການຄົ້ນຄວ້າບັນດາເນື້ອໃນທີ່ຈະນຳເຂົ້າໃນກອງປະຊຸມຄະນະປະຈຳສະພາປະຊາຊົນແຂວງ ເພື່ອຮັບປະກັນການພິຈາລະນາຕົກລົງບັນຫາສຳຄັນພື້ນຖານຂອງແຂວງ ໃຫ້ສອດຄ່ອງກັບແນວທາງນະໂຍບາຍຂອງພັກ, ລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍຕາມການສະເໜີ ຂອງອົງການປົກຄອງແຂວງ ຕິດພັນກັບການກຳນົດແຜນວຽກຈຸດສຸມຂອງສະພາປະຊາຊົນແຂວງ ແລະ ພາກສ່ວນກ່ຽວຂ້ອງ;

2.) ກະກຽມເນື້ອໃນເພື່ອດຳເນີນກອງປະຊຸມຮ່ວມ ລະຫວ່າງ ສະພາປະຊາຊົນແຂວງ ກັບ ຄະນະສະມາຊິກສະພາແຫ່ງຊາດ ປະຈຳເຂດເລືອກຕັ້ງທີ 7, ອົງການປົກຄອງແຂວງ ແລະ ຄະນະປະຈຳແນວລາວສ້າງຊາດ ເພື່ອຕີລາຄາຄືນການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ຕາມກົດໝາຍ ໂດຍສະເພາະແມ່ນນິຕິກຳທີ່ໄດ້ເຊັ່ນຮ່ວມກັນ; ດຳເນີນກອງປະຊຸມຮ່ວມ ລະຫວ່າງ ຄະນະປະຈຳສະພາປະຊາຊົນແຂວງ ກັບ ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ເພື່ອຮັບຟັງບັນຫາສຳຄັນພື້ນຖານຂອງເມືອງ;

ນອກນັ້ນ, ຍັງຈະໄດ້ເຂົ້າຮ່ວມກະກຽມ ແລະ ດຳເນີນກອງປະຊຸມໃຫຍ່ 3 ຂັ້ນຂອງພັກ ຢູ່ບັນດາເມືອງ, ພະແນການ ອົງການ, ກົມກອງ ອ້ອມຂ້າງແຂວງ; ກອງປະຊຸມຄົບຄະນະບໍລິຫານງານພັກແຂວງ, ກອງປະຊຸມອົງການປົກຄອງແຂວງ.

**3. ດ້ານການຕິດຕາມກວດກາ**

ໃນ 6 ເດືອນທ້າຍປີ 2024 ສະພາປະຊາຊົນແຂວງ ຈະໄດ້ສຸມໃສ່ຕິດຕາມກວດກາວຽກງານຕົ້ນຕໍ ດັ່ງນີ້:

1) ຕິດຕາມກວດກາການຈັດຕັ້ງປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ນິຕິກຳໃຕ້ກົດໝາຍ ໃນຂົງເຂດສະພາປະຊາຊົນແຂວງ, ປ້ອງກັນຊາດ, ປ້ອງກັນຄວາມສະຫງົບ, ເສດຖະກິດ, ວັດທະນະທຳ-ສັງຄົມ ແລະ ຂົງເຂດອື່ນ;

2) ຕິດຕາມກວດກາການຈັດຕັ້ງປະຕິບັດມະຕິກອງປະຊຸມສະໄໝສາມັນ ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ເປັນຕົ້ນ: ແຜນພັດທະນາເສດຖະກິດ-ສັງຄົມ, ແຜນງົບປະມານແຫ່ງລັດ, ວາລະແຫ່ງຊາດ ວ່າດ້ວຍການແກ້ໄຂບັນຫາຢາເສບຕິດ, ໂຄງການລົງທຶນຂອງລັດ , ໂຄງການກູ້ຢືມ ແລະ ຊ່ວຍເຫຼືອລ້າ ທີ່ປະຕິບັດຊັກຊ້າ, ສິ່ງຜົນກະທົບຕໍ່ສິ່ງແວດລ້ອມ ແລະ ຊີວິດການເປັນຢູ່ຂອງປະຊາຊົນ; ຕິດຕາມກວດກາຍຸດທະສາດແຮ່ທາດ, ແຜນການເຄື່ອນໄຫວຂອງສານປະຊາຊົນ, ອົງການໄອຍະການປະຊາຊົນ, ອົງການກວດສອບປະຈຳພາກເໜືອ 1, ອົງການກວດກາລັດແຂວງ, ອົງການສືບສວນ-ສອບສວນ ແລະ ອົງການປະຕິບັດຄຳຕັດສິນຂອງສານ;

3) ຕິດຕາມກວດກາຜ່ານກົນໄກການດຳເນີນກອງປະຊຸມຮ່ວມ ລະຫວ່າງ ສະພາປະຊາຊົນແຂວງ ກັບ ອົງການປົກຄອງແຂວງ, ສານປະຊາຊົນແຂວງ, ອົງການໄອຍະການປະຊາຊົນແຂວງ, ອົງການກວດກາລັດແຂວງ, ກອງປະຊຸມປະຈຳປີ ຂອງ 3 ຄະນະກຳມະການ ແລະ ຄະນະເລຂາທິການສະພາປະຊາຊົນແຂວງ;

4) ຕິດຕາມກວດກາຍຸດທະສາດການສຶກສາ, ການພັດທະນາຊັບພະຍາກອນມະນຸດຢູ່ຂັ້ນແຂວງ, ວຽກງານເຜົ່າ ແລະ ສາສະໜາ ຢູ່ບັນດາເມືອງເປົ້າໝາຍ;

5) ສືບຕໍ່ຕິດຕາມ, ຊຸກຍູ້ ການຈັດຕັ້ງປະຕິບັດພາລະບົດບາດ, ສິດ ໜ້າທີ່ ຂອງຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ 3 ເມືອງຄື: ເມືອງ ໄຊຍະບຸລີ, ເມືອງ ຫົງສາ ແລະ ເມືອງ ທົ່ງມີໄຊ ຕາມກົດໝາຍ ແລະ ມະຕິຄະນະປະຈຳສະພາປະຊາຊົນແຂວງ ກຳນົດ;

6) ສືບຕໍ່ຕິດຕາມກວດກາຜ່ານກົນໄກ ການຮັບ, ການພິຈາລະນາ, ການແກ້ໄຂ ຄຳສະເໜີ, ສາຍດ່ວນ, ຄຳຮ້ອງຂໍຄວາມເປັນທຳ; ຕ້ອນຮັບ ແລະ ໃຫ້ຄຳປຶກສາດ້ານກົດໝາຍແກ່ປະຊາຊົນ;

7) ຕິດຕາມກວດກາການຈັດຕັ້ງປະຕິບັດໜ້າທີ່ ຂອງບຸກຄະລາກອນ ທີ່ສະພາປະຊາຊົນແຂວງເລືອກຕັ້ງ ແລະ ຮັບຮອງເອົາການແຕ່ງຕັ້ງ ໂດຍຜ່ານການລາຍງານ, ການປະເມີນ ໃນກອງປະຊຸມສະໄໝສາມັນ ເທື່ອທີ 8 ຂອງສະພາປະຊາຊົນແຂວງ ຊຸດທີ II.

**5. ດ້ານການສ້າງຄວາມເຂັ້ມແຂງໃຫ້ແກ່ສະພາປະຊາຊົນແຂວງ**

1) ສືບຕໍ່ປະສານສົມທົບ ກັບ ສະພາແຫ່ງຊາດ, ຄະນະພັກອົງການປົກຄອງແຂວງ ສ້າງເງື່ອນໄຂໃຫ້ສະມາຊິກສະພາປະຊາຊົນແຂວງ, ພະນັກງານ-ລັດຖະກອນ ໄດ້ໄປຍົກລະດັບວິຊາສະເພາະ, ທິດສະດີການເມືອງ ແລະ ຝຶກອົບຮົມຫົວຂໍ້ຕ່າງໆພາຍໃນ ແລະ ຕ່າງປະເທດ; ສືບຕໍ່ຍາດແຍ່ງງົບປະມານຈາກສະພາແຫ່ງຊາດ, ອົງການປົກຄອງແຂວງ ເພື່ອຈັດຝຶກອົບຮົມໃຫ້ສະມາຊິກສະພາປະຊາຊົນແຂວງ ແລະ ບຸກຄະລາກອນຂອງສະພາປະຊາຊົນແຂວງ ໃຫ້ໄດ້ 2 ຄັ້ງ;

2) ສືບຕໍ່ເພີ່ມທະວີການປະສານງານ ກັບ ອົງການປົກຄອງ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ, ອົງການໄອຍະການປະຊາຊົນ, ສານປະຊາຊົນ, ອົງການກວດສອບປະຈຳພາກເໜືອ 1, ອົງການກວດກາລັດແຂວງ ເພື່ອເປັນບ່ອນອີງໃນການເຄື່ອນໄຫວວຽກງານ ໃຫ້ມີຄວາມວ່ອງໄວ, ໂປ່ງໃສ, ຮັບປະກັນການຈັດຕັ້ງປະຕິບັດໜ້າທີ່ວຽກງານມີຄຸນນະພາບ, ສາມາດກວດສອບໄດ້ຄວາມຖືກຕ້ອງທາງດ້ານກົດໝາຍ;

3) ຈັດກອງປະຊຸມສະຫຼຸບຖອດຖອນບົດຮຽນວຽກງານຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ໃຫ້ໄດ້ 1 ຄັ້ງ ແນ່ໃສ່ສ້າງເງື່ອນໄຂໃຫ້ ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ໄດ້ພົບປະແລກປ່ຽນບົດຮຽນເຊິ່ງກັນ ແລະ ກັນ;

4) ຄົ້ນຄວ້າ, ຮຽບຮຽງ ປະຫວັດການເຄື່ອນໄຫວ ຂອງສະມາຊິກສະພາປະຊາຊົນແຂວງ ຊຸດທີ I ແລະ ຊຸດທີ II.

**6. ດ້ານການເຄື່ອນໄຫວ ຂອງຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ**

1) ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ເປັນເຈົ້າການປະສານສົມທົບ ກັບ ອົງການປົກຄອງເມືອງ ສ້າງແຜນລົງເຜີຍແຜ່ຜົນສຳເລັດກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX ແລະ ສະພາປະຊາຊົນແຂວງ ຊຸດທີ II ຕິດພັນກັບການເກັບກຳບັນຫາຕ່າງໆ ຂອງປະຊາຊົນ, ວິເຄາະວິໄຈ ຄຳເຫັນ ຂອງແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າ, ອົງການຈັດຕັ້ງມະຫາຊົນ ເພື່ອສົມທົບກັບອົງການປົກຄອງເມືອງ ຄົ້ນຄວ້າແກ້ ໄຂຄຳສະເໜີ, ສາຍດ່ວນ ໃຫ້ຖືກຕ້ອງສອດຄ່ອງ ແລະ ທັນເວລາ;

2) ຊຸກຍູ້ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ຕິດຕາມ, ຊຸກຍູ້ ອົງການປົກຄອງເມືອງ ຄົ້ນຄວ້າ, ພິຈາລະນາ ແລະ ແກ້ໄຂ ຄຳຮ້ອງ, ຄຳສະເໜີ ແລະ ສາຍດ່ວນ ຂອງຜູ້ມີສິດເລືອກຕັ້ງ ຢູ່ເຂດເລືອກຕັ້ງຂອງຕົນ ໃຫ້ຖືກຕ້ອງຕາມກົດໝາຍ, ນິຕິກຳໃຕ້ກົດໝາຍ ແລະ ທັນເວລາ;

3) ຊຸກຍູ້ ຄະນະສະມາຊິກສະພາປະຊາຊົນແຂວງ ປະຈຳເຂດເລືອກຕັ້ງເມືອງ ປັບປຸງກົນໄກ, ແບບແຜນວິທີເຮັດວຽກ ເປັນຕົ້ນແມ່ນ: ການຜັນຂະຫຍາຍມະຕິ ແລະ ແຜນວຽກຂອງສະພາປະຊາຊົນແຂວງ ມາເປັນແຜນວຽກລະອຽດຂອງຕົນ, ການສ້າງແຜນຕິດຕາມກວດກາ, ການປະຕິບັດລະບອບປະຊຸມປະຈຳເດືອນ, ປະຈຳປີ, ກອງປະຊຸມຮ່ວມກັບອົງການປົກຄອງເມືອງ ແລະ ລະບອບລາຍງານ, ສ່ອງແສງ ໃຫ້ເປັນປົກກະຕິກວ່າເກົ່າ.

**7. ດ້ານການເຄື່ອນໄຫວວຽກງານຕ່າງປະເທດ**

ສືບຕໍ່ປະຕິບັດແນວທາງການຕ່າງປະເທດຂອງພັກ, ລັດ ໃນແຕ່ລະໄລຍະ; ເຂົ້າຮ່ວມ ແລະ ຕ້ອນຮັບ ການມາຢ້ຽມຢາມ ແລະ ເຮັດວຽກຂອງການນຳຂັ້ນສູງບັນດາປະເທດເພື່ອນມິດຍຸດທະສາດ, ພາກພື້ນ ແລະ ສາກົນ ຕາມການເຊີນຂອງສະພາແຫ່ງຊາດ ແລະ ອົງການປົກຄອງແຂວງ; ປະກອບສ່ວນເປັນເຈົ້າພາບ ຈັດກອງປະຊຸມໃຫຍ່ລັດຖະສະພາ ລະຫວ່າງ ຊາດອາຊຽນ (AIPA) ຄັ້ງທີ 45 ແລະ ກອງປະຊຸມປີນອ້ອມ; ເຂົ້າຮ່ວມຝຶກອົບຮົມ ຫົວຂໍ້ສະເພາະສຳລັບການນຳຂັ້ນສູງ, ວຽກງານອົງເຂດນິຕິບັນຍັດ ແລະ ຕຸລາການ ຢູ່ ສປ ຈີນ; ເພີ່ມທະວີການຕິດຕາມກວດກາຊຸກຍູ້ການປະເມີນການຈັດຕັ້ງປະຕິບັດ ບົດບັນທຶກການຮ່ວມມື ລະຫວ່າງ ແຂວງໄຊຍະບູລີ ກັບ ບັນດາແຂວງຮຽກສ່ຽວ, ແຂວງມິດຕະພາບ ຮ່ວມມື ກັບ ບັນດາແຂວງ ສສ ຫວຽດນາມ ແລະ ກະກຽມຕ້ອນຮັບຄະນະຜູ້ແທນ ຈາກແຂວງ ດຽນບຽນ ສສ ຫວຽດນາມ.

III. ມາດຕະການຈັດຕັ້ງປະຕິບັດ

ເພື່ອຮັບປະກັນໃຫ້ແກ່ການຈັດຕັ້ງປະຕິບັດແຜນການເຄື່ອນໄຫວວຽກງານ 6 ເດືອນທ້າຍປີ 2024 ໃຫ້ໄດ້ຮັບຜົນສໍາເລັດຕາມລະດັບຄາດໝາຍທີ່ວາງໄວ້ ຄະນະປະຈໍາສະພາປະຊາຊົນແຂວງ ໄດ້ກໍານົດມາດຕະການດັ່ງນີ້:

1) ຄະນະປະຈໍາສະພາປະຊາຊົນແຂວງ, ຄະນະສະມາຊິກສະພາປະຊາຊົນແຂວງ ປະຈໍາເຂດເລືອກຕັ້ງ ເອົາໃຈໃສ່ຈັດຕັ້ງຜັນຂະຫຍາຍແຜນການສະບັບນີ້ ອອກເປັນວຽກຈຸດສຸມໃຫ້ລະອຽດ ເພື່ອຈັດຕັ້ງປະຕິບັດໃຫ້ແທດເໝາະຕາມພາລະບົດບາດ, ສິດ ແລະ ໜ້າທີ່ ແລະ ຄວາມຮັບຜິດຊອບຂອງແຕ່ລະພາກສ່ວນ ໃຫ້ມີຄຸນນະພາບ;

2) ບັນດາຄະນະກໍາມະການ, ຄະນະເລຂາທິການ ແລະ ພະນັກງານ-ລັດຖະກອນ ຂອງສະພາ ຕ້ອງຍົກສູງຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດແຜນການສະບັບນີ້ໃຫ້ໄດ້ຮັບປະສິດທິພາບ ແລະ ປະສິດທິຜົນສູງ ໄປຄຽງຄູ່ກັບການຈັດຝຶກອົບຮົມສໍາມະນາ ເພື່ອແລກປ່ຽນບົດຮຽນ, ຄໍາເຫັນຮ່ວມກັນ ຢ່າງເປັນປົກກະຕິ;

3) ທຸກພາກສ່ວນ ຕ້ອງຍົກສູງ ແລະ ເພີ່ມທະວີການປະສານສົມທົບໃຫ້ກົມກຽວກັນແຕ່ຫົວທີ ລະຫວ່າງພາກສ່ວນຕ່າງໆຂອງສະພາ ແລະ ພາກສ່ວນກ່ຽວຂ້ອງຂອງແຂວງ ເພື່ອຮັບປະກັນການຈັດຕັ້ງປະຕິບັດວຽກງານຖືກຕ້ອງຕາມລັດຖະທໍາມະນູນ, ກົດໝາຍ, ນິຕິກໍາໃຕ້ກົດໝາຍ ແລະ ສອດຄ່ອງກັບສະພາບຄວາມເປັນຈິງຂອງເສດຖະກິດສັງຄົມໃນແຕ່ລະໄລຍະ;

4) ຜ່ານການຈັດຕັ້ງຕົວຈິງ ຕ້ອງມີການຕິດຕາມກວດກາ, ຊຸກຍູ້ ແລະ ສະຫຼຸບສ່ອງແສງລາຍງານ ຂໍທິດຊີ້ນໍາປົກກະຕິ ແລະ ທັນການ.

ປະທານສະພາປະຊາຊົນແຂວງ

ເພັງນີລັນ ຄໍາພັນເພັງ